ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------000------------

ກະຊວງພະລັງງານ ແລະ ບໍ່ແຮ່

ກົມທຸລະກິດພະລັງງານ

ເລກທີ່ : 1474 /ພບ.ກທພ

ນະຄອນຫຼວງວຽງຈັນ, ວັນທີ : 18 DEC 2012

ຮຽນ/ເຖິງ :
- ທ່ານ ຫົວໜ້າກົມພາສີ, ກະຊວງການເງິນ.
- ທ່ານ ຫົວໜ້າກົມ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.
- ທ່ານ ຫົວໜ້າກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ.

ເລື່ອງ : ຂັ້ນຕອນການຂໍອະນຸຍາດນຳເຂົ້າ ( Import Permit ) ວັດຖຸ, ອຸປະກອນ, ພາຫະນະ, ນ້ຳມັນເຊື້ອໄຟ ທີ່ມານຳໃຊ້ ແລະ ຮັບໃຊ້ການກໍ່ສ້າງໂຄງການພະລັງງານທີ່ພັດທະນາໂດຍເອກະຊົນ.

- ອີງຕາມເອກະສານຂອງກົມພາສີ, ສະບັບເລກທີ່ 00699/.ກພສ, ລົງວັນທີ່ 19/10/2012.
- ອີງຕາມການຕົກລົງຂອງກອງປະຊຸມໃນຄັ້ງວັນທີ່ 6/12/2012.

ກົມທຸລະກິດພະລັງງານ ຂໍຖືເປັນກຽດສະເໜີມາຍັງທ່ານ, ກ່ຽວກັບຂັ້ນຕອນການຂໍອະນຸຍາດນຳເຂົ້າ(Import Permit) ວັດຖຸ, ອຸປະກອນ, ພາຫະນະ ແລະ ນ້ຳມັນເຊື້ອໄຟ ແມ່ນໄດ້ຕົກລົງໃນກອງປະຊຸມ ຄັ້ງວັນທີ່ 6/12/2012 ທີ່ຈັດຂຶ້ນຢູ່ກົມທຸລະກິດພະລັງງານດັ່ງນີ້:

1. ຂັ້ນຕອນການອະນຸຍາດນຳເຂົ້າ (Import permit) ວຸດຖຸ, ອຸປະກອນ, ພາຫະນະ ແລະ ນ້ຳມັນເຊື້ອໄຟ ໃນກອງປະຊຸມໄດ້ຕົກລົງວ່າຖ້າທາງໂຄງການມີແຜນການນຳເຂົ້າ (Master list) ທີ່ກະຊວງການເງິນໄດ້ຮັບຮອງເອົາແລ້ວ, ແມ່ນໃຫ້ສະເໜີຂໍອະນຸມັດວັດຖຸ, ອຸປະກອນ, ພະຫະນະ ແລະ ນ້ຳມັນເຊື້ອໄຟດັ່ງກ່າວ ຕໍ່ຂະແໜງການນຳເຂົ້າ(ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ)ໂດຍກົງ ໂດຍບໍ່ຜ່ານຂະແໜງພະລັງງານ(ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່)ອີກ, ຊຶ່ງຈະເລີ່ມປະຕິບັດແຕ່ວັນທີ່ 1/1/2013 ເປັນຕົ້ນໄປ.
2. ຖ້າຫາກມີບາງລາຍການທີ່ບໍ່ມີໃນແຜນການນຳເຂົ້າ (Master list) ແຕ່ທາງບໍລິສັດມີຄວາມຈຳເປັນນຳເຂົ້າວັດຖຸ, ອຸປະກອນ, ພາຫະນະ ແລະ ນ້ຳມັນເຊື້ອໄຟ ແມ່ນທາງບໍລິສັດຕ້ອງສະເໜີມາຜ່ານກົມທຸລະກິດພະລັງງານເພື່ອຢັ້ງຢືນຄວາມຈຳເປັນຂອງວັດຖຸສິ່ງຂອງຕາມແຕ່ລະກໍລະນີຄວາມຈຳເປັນ ຈຶ່ງດຳເນີນການອະນຸມັດຕາມຂັ້ນຕອນ ຕາມທີ່ເຄີຍປະຕິບັດຜ່ານມາ.

ດັ່ງນັ້ນ,ຈຶ່ງສະເໜີມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມທຸລະກິດພະລັງງານ